

# 6 ທັກສະໃນການຟັງ

ໂດຍໄດ້ຮັບການຊ່ວຍເຫຼືອ, ເດັກຜູ້ຊຶ່ງມີບັນຫາໃນການໄດ້ຍິນ ສາມາດຮຽນຮູ້ວິທີໃນການຕັ້ງໃຈຟັງບັນດາສຽງທີ່ພວກເຂົາມີຄວາມສາມາດໄດ້ຍິນ. ຄວາມເຂົ້າໃຈກ່ຽວກັບສຽງຊ່ວຍໃຫ້ເດັກຮຽນຮູ້ໂລກອ້ອມຂ້າງ, ຊ່ວຍໃຫ້ພວກເຂົາສາມາດໃຊ້ຄວາມອາດສາມາດໃນການໄດ້ຍິນໃຫ້ໄດ້ດີຂຶ້ນ, ສາມາດປ້ອງກັນຕົນເອງ, ດຳລົງຊີວິດຢ່າງປອດໄພ ແລະ ຊ່ວຍເຫຼືອຕົນເອງໄດ້.

ເດັກຈຳນວນໜຶ່ງຍັງສາມາດໄດ້ຍິນໜ້ອຍໜຶ່ງ ເມື່ອຄົນອື່ນລົມກັບພວກເຂົາ. ເດັກຫຼາຍຄົນທີ່ມີບັນຫາໃນການໄດ້ຍິນ ບໍ່ສາມາດໄດ້ຍິນສຽງຄ່ອຍ ແຕ່ພວກເຂົາຜັດສາມາດໄດ້ຍິນສຽງທີ່ດັງ, ເດັກຈຳນວນໜຶ່ງສາມາດໄດ້ຍິນສຽງທີ່ມີໂທນສຽງຕ່ຳ ເຊັ່ນ: ສຽງພາຍຸ, ແຕ່ກັບບໍ່ສາມາດໄດ້ຍິນສຽງທີ່ມີໂທນສຽງສູງ ເຊັ່ນ: ສຽງໝາກຫວິດ. ແຕ່ເນື່ອງຈາກ ພວກເຂົາບໍ່ເຂົ້າໃຈຄວາມໝາຍຂອງສຽງ, ພວກເຂົາຈຶ່ງບໍ່ໄດ້ໃຫ້ຄວາມສົນໃຈແກ່ສຽງເຫຼົ່ານັ້ນ.

ສະນັ້ນ ຖ້າເດັກນ້ອຍເຫຼົ່ານີ້ ໄດ້ມີການຝຶກຊ້ອມການຟັງ, ມັນຈະຊ່ວຍໃຫ້ພວກເຂົາພັດທະນາ ແລະ ໝູນໃຊ້ຄວາມສາມາດໃນການໄດ້ຍິນທີ່ພວກເຂົາຍັງພໍມີ.

ເພື່ອເຮັດໃຫ້ເດັກນ້ອຍສາມາດໄດ້ຍິນໄດ້ດີຂຶ້ນ ເດັກນ້ອຍຄວນ:

- ສັງເກດສຽງອ້ອມຂ້າງ ແລະ ສຽງປາກເວົ້າ.
- ຊອກຫາແຫຼ່ງທີ່ມາຂອງສຽງອ້ອມຂ້າງ ຫຼື ສຽງປາກເວົ້າດັ່ງກ່າວ.
- ຈື່ຈຳໃຫ້ໄດ້ວ່າແມ່ນສຽງຫຍັງ.
- ບອກຄວາມແຕກຕ່າງຂອງສຽງເຫຼົ່ານັ້ນ.

ໃນພາກນີ້ ຈະປະກອບມີບັນດາກິດຈະກຳ ທີ່ຈະຊ່ວຍກະຕຸກຊຸກຍູ້ໃຫ້ເດັກທີ່ມີບັນຫາໃນການໄດ້ຍິນ ສັງເກດ, ຟັງ ແລະ ຮູ້ສຶກສາຄວາມສັ່ນສະເທືອນຂອງສຽງຕ່າງໆ. ກິດຈະກຳດັ່ງກ່າວຈະຊ່ວຍໃຫ້ເຂົາເຈົ້າຮຽນຮູ້ກ່ຽວກັບສຽງ, ພ້ອມນັ້ນ ກໍ່ຈະຊ່ວຍໃຫ້ທ່ານຮູ້ໄດ້ວ່າ ເດັກນ້ອຍຜູ້ນັ້ນ ພໍມີຄວາມສາມາດໃນການໄດ້ຍິນຢູ່ບໍ ແລະ ແມ່ນສຽງປະເພດໃດທີ່ລາວສາມາດໄດ້ຍິນ. ເຊິ່ງບັນດາຂໍ້ມູນເຫຼົ່ານີ້ ຈະຊ່ວຍໃຫ້ທ່ານສາມາດຮູ້ໄດ້ວ່າ ເດັກນ້ອຍຜູ້ນັ້ນ ຄວນຮຽນພາສາເວົ້າ ຫຼື ພາສາມື ຈຶ່ງຈະມີຄວາມເໝາະສົມກວ່າກັນ.



ໃນຂະນະທີ່ເຮັດກິດຈະກຳຢູ່ໃນບົດນີ້, ທ່ານຄວນສັງເກດບັນດາສິ່ງທີ່ສະແດງໃຫ້ຮູ້ວ່າ ເດັກຜູ້ນັ້ນ ກຳລັງຟັງສຽງ ເດັກນ້ອຍອາດສະແດງໃຫ້ຮູ້ວ່າ ລາວກຳລັງຟັງ ໂດຍການຫັນໜ້າເບິ່ງ, ປ່ຽນສີໜ້າ, ເຄື່ອນຍ້າຍຮ່າງກາຍ, ຢືນຈິ້ງຢູ່, ກະພິບຕາ ຫຼື ອາດຈະຮ້ອງເປັນສຽງອອກມາ.




ໃນໄລຍະທີ່ທ່ານຝຶກຊ້ອມການຟັງໃຫ້ເດັກນັ້ນ. ສຽງຈາກສິ່ງແວດລ້ອມອ້ອມຂ້າງທີ່ດັງສະໝ່ຳສະເໝີ ອາດເຮັດໃຫ້ເດັກບໍ່ສາມາດໄດ້ຍິນສຽງຂອງທ່ານ ຫຼື ບໍ່ສາມາດແຍກສຽງທີ່ທ່ານຕ້ອງການໃຫ້ລາວໄດ້ຍິນໄດ້. ຖ້າເດັກຄົນນັ້ນຫາກໃຊ້ເຄື່ອງຊ່ວຍຟັງ, ທ່ານຄວນຈື່ໄວ້ວ່າເຄື່ອງຊ່ວຍຟັງເຮັດໃຫ້ເດັກ ໄດ້ຍິນສຽງຂອງທ່ານດັງຂຶ້ນ ແຕ່ກໍ່ເຮັດໃຫ້ລາວໄດ້ຍິນສຽງຂອງສິ່ງອ້ອມຂ້າງດັງຂຶ້ນໄປນຳເຊັ່ນດຽວກັນ.

ຍ້ອງຍໍເດັກ ຖ້າລາວມີການຕອບສະໜອງຕໍ່ສຽງ ຫຼື ຄຳເວົ້າ. ຖ້າລາວບໍ່ມີການຕອບສະໜອງໃຫ້ເຮັດສຽງດັ່ງກ່າວອີກເທື່ອໜຶ່ງ ຖ້າທ່ານສາມາດເຮັດໄດ້. ແທນທີ່ຈະເຮັດໃຫ້ສຽງນັ້ນດັງຂຶ້ນ ໃຫ້ທ່ານພະຍາຍາມເຮັດໃຫ້ສຽງດັ່ງກ່າວ ຫຍັບມໍ່ເຂົ້າຫາລາວ. ທ່ານຄວນມີຄວາມອົດທົນ ເພາະວ່າໄລຍະເວລາທີ່ເດັກນ້ອຍ ຈະພັດທະນາທັກສະໃນການຟັງແມ່ນກິນເວລາດົນ.




*ວັນດີ ໄດ້ຍິນສຽງຂອງພໍ່ລາວໜ້ອຍໜຶ່ງ. ແຕ່ຍ້ອນມີສຽງລົບກວນຈາກເດັກນ້ອຍອ້ອມຂ້າງ, ລາວຈຶ່ງບໍ່ແນ່ໃຈວ່າ ພໍ່ລາວເວົ້າຫຍັງ.*

# ຄຳແນະນຳສຳລັບຜູ້ເປັນພໍ່ແມ່

ຈົ່ງພະຍາຍາມສັງເກດບັນດາສຽງທີ່ຢູ່ອ້ອມຂ້າງ. ຄົນສ່ວນຫຼາຍທີ່ມີຄວາມສາມາດໃນການໄດ້ຍິນໂດຍປົກກະຕິ ມັກຈະເມີນເສີຍຕໍ່ສຽງອ້ອມຂ້າງ ຍ້ອນວ່າພວກເຂົາມີຄວາມຊິນເຄີຍກັບມັນແລ້ວ.

*ທັກສະໃນການຟັງ ແມ່ນມີຄວາມສຳຄັນສຳລັບເດັກນ້ອຍທຸກໆຄົນ ທີ່ມີບັນຫາໃນການໄດ້ຍິນ, ເດັກນ້ອຍເຫຼົ່ານີ້ຈະດຳລົງຊີວິດຢ່າງປອດໄພຂຶ້ນ ຖ້າພວກເຂົາຫາກຮຽນຮູ້ວິທີນຳໃຊ້ຄວາມສາມາດໃນການຟັງທີ່ພວກເຂົາມີຢູ່.*







ທ່ານຄວນດັດປັບເອົາບັນດາກິດຈະກຳທີ່ຢູ່ໃນພາກນີ້ມາໝູນໃຊ້ ເພາະວ່າ ຖ້າເດັກນ້ອຍໄດ້ຢູ່ໃກ້ສຽງຕ່າງໆເລື້ອຍໆ ເຂົາອາດສາມາດໄດ້ຍິນ. ຍົກຕົວຢ່າງ: ຖ້າຫາກທ່ານຮູ້ວ່າ ເດັກນ້ອຍຜູ້ນັ້ນ ສາມາດໄດ້ຍິນສຽງໂທນຕ່ຳ ບໍ່ແມ່ນສຽງໂທນສູງ, ກໍ່ຈົ່ງໃຊ້ສຽງໂທນຕ່ຳ ເພື່ອມາໝູນໃຊ້ໃນກິດຈະກຳ ຖ້າທ່ານຍັງບໍ່ແນ່ໃຈວ່າ ສຽງປະເພດໃດທີ່ລາວສາມາດໄດ້ຍິນ ໃຫ້ທ່ານທົດລອງຫຼາຍປະເພດສຽງ.

# ກິດຈະກຳ

## ► ວິທີ ທີ່ຈະຊ່ວຍໃຫ້ເດັກສັງເກດສຽງຕ່າງໆ

- ເມື່ອທ່ານໄດ້ຍິນສຽງທີ່ເກີດຂຶ້ນຢູ່ໃນບໍລິເວນໃກ້ໆ, ຈົ່ງສະແດງໃຫ້ເດັກນ້ອຍຮູ້ວ່າ ມີບາງສິ່ງບາງຢ່າງໄດ້ກຳລັງເກີດຂຶ້ນຢູ່ບໍ່ໆນັ້ນ, ກະຕຸ້ນໃຫ້ເດັກຫຼຽວໜ້າໄປຫາສຽງດັ່ງກ່າວ.




- ໃຫ້ເດັກໄດ້ຫຼິ້ນເຄື່ອງຫຼິ້ນທີ່ມີສຽງ. ຮຽກຮ້ອງຄວາມສົນໃຈຂອງເດັກດ້ວຍເຄື່ອງຫຼິ້ນດັ່ງກ່າວຫຼາຍໆຄັ້ງ, ຖ້າເຄື່ອງຫຼິ້ນດັ່ງກ່າວຫາກບໍ່ມີສຽງດັງ, ທ່ານອາດຈະນຳເອົາບາງສິ່ງບາງຢ່າງເຊັ່ນ: ກະດິງມາຜູກຕິດໃສ່ ເພື່ອເຮັດໃຫ້ມັນມີສຽງດັງຂຶ້ນ.




- ຊອກອຸປະກອນທີ່ທ່ານສາມາດເຮັດໃຫ້ມີສຽງດັງຂຶ້ນ ຫຼື ຢຸດໄດ້. ສະແດງໃຫ້ເດັກຮູ້ວ່າກຳລັງຈະມີບາງສິ່ງເກີດຂຶ້ນ ຫຼັງຈາກນັ້ນ ຈຶ່ງສ້າງສຽງດັ່ງກ່າວ, ເຮັດໃຫ້ສຽງດັງຂຶ້ນຫຼາຍຄັ້ງ ຊ້ຳໄປຊ້ຳມາ. ພະຍາຍາມຊີ້ໄປທີ່ໃບຫູຂອງທ່ານ ເມື່ອສຽງນັ້ນດັງຂຶ້ນ ເຊິ່ງມັນຈະຊ່ວຍໃຫ້ເດັກຮູ້ວ່າໄດ້ມີສຽງບາງສິ່ງບາງຢ່າງດັງຂຶ້ນແລ້ວ.

- ປະດິດສ້າງເກມທີ່ເດັກນ້ອຍຕ້ອງຕັ້ງໃຈຟັງ ເພື່ອຫຼິ້ນເກມດັ່ງກ່າວ.



*ເມື່ອເດັກນ້ອຍໄດ້ຍິນສຽງກອງ ໃຫ້ພວກເຂົາເຕັ້ນ.*



*ຖ້າດົນຕີຢຸດ ໃຫ້ເດັກນ້ອຍ ພ້ອມກັນນັ່ງລົງ.*

ຜູ້ໃຫຍ່ບາງຄົນອາດຮູ້ສຶກອຶດອັດ ແລະ ບໍ່ຊິນເຄີຍທີ່ຈະເຂົ້າຮ່ວມກິດຈະກຳກັບເດັກນ້ອຍ. ແຕ່ວ່າດົນຕີ ສາມາດເຮັດໃຫ້ເດັກຮຽນຮູ້ການໝູນໃຊ້ຄວາມສາມາດໃນການໄດ້ຍິນຂອງເຂົາ ແລະ ກໍ່ເປັນສິ່ງດີທີ່ຈະນຳເອົາທັງຜູ້ໃຫຍ່ ແລະ ເດັກນ້ອຍມາຮ່ວມກິດຈະກຳນີ້. ໃຫ້ທ່ານຈົ່ງຄິດຊອກຫາບັນດາເພງທີ່ທ່ານເຄີຍຮ້ອງຕອນເປັນເດັກ ຫຼື ແອບຮ້ອງເພງທີ່ເດັກນ້ອຍຮູ້, ເລືອກເອົາເພງທີ່ມີຈັງຫວະມ່ວນຊື່ນ ແລະ ເພງທີ່ທຸກຄົນສາມາດຮ້ອງນຳກັນໄດ້. ທັງຜູ້ໃຫຍ່ ແລະ ເດັກນ້ອຍຄວນເຮັດກິດຈະກຳນີ້ຮ່ວມກັນ ແລະ ຖືວ່າກິດຈະກຳຮ້ອງເພງນີ້ເປັນກິດຈະກຳຂອງຄອບຄົວທີ່ຕ້ອງໄດ້ເຮັດທຸກໆມື້.

## ▶ ຂັ້ນຕອນວິທີ ທີ່ຊ່ວຍໃຫ້ລູກຂອງທ່ານສັງເກດສຽງປາກເວົ້າ

- ເວົ້າກັບເດັກນ້ອຍໃນຂະນະທີ່ອູ້ມເຂົາເຈົ້າ, ເມື່ອເດັກຈັບເອິກ, ຄໍ ຫຼື ແກ້ມຂອງທ່ານ ເຊິ່ງເຂົາເຈົ້າຈະສາມາດສຳຜັດເອົາຄວາມສັ່ນສະເທືອນຈາກສຽງຂອງທ່ານໄດ້.




- ໃນຂະນະທີ່ທ່ານເຮັດສິ່ງໃດໜຶ່ງ ກັບເດັກນ້ອຍ, ຈົ່ງພະຍາຍາມສ້າງສຽງໄປພ້ອມກັບກິດຈະກຳດັ່ງກ່າວ.




- ຮ້ອງຊື່ຂອງເດັກເລື້ອຍໆ.




- ເມື່ອເດັກນ້ອຍຮູ້ຈັກຊື່ຂອງຕົນເອງ, ຈົ່ງໃຊ້ຊື່ຂອງເຂົາເຂົ້າໃນບົດເພງ ແລະ ນິທານ ເຊິ່ງສິ່ງນີ້ ຈະຊ່ວຍດຶງດູດຄວາມສົນໃຈຂອງເດັກນ້ອຍ.




- ເວົ້າກັບລູກນ້ອຍຂອງທ່ານເລື້ອຍໆເທົ່າທີ່ຈະເຮັດໄດ້, ໃຊ້ສຽງເວົ້າຂອງທ່ານທີ່ມີສຽງແຕກຕ່າງກັນ ພະຍາຍາມຢືດສຽງເວົ້າຂອງທ່ານໃຫ້ຍາວອອກ, ແລະ ມີສຽງຕ່ຳ, ສຽງສູງ. ນຳໃຊ້ຄຳສັບທີ່ມີຄວາມໝາຍກົງກັນຂ້າມກັນ.







*ໃຊ້ຄຳສັບທີ່ມີສຽງຍາວຢືດອອກໄດ້ ເຊັ່ນ: ຄຳວ່າ ("ນອນ...") ແລະ ກົງກັນຂ້າມກໍ່ໝູນໃຊ້ຄຳສັບທີ່ມີສຽງສັ້ນ ເຊັ່ນ: ຄຳວ່າ "ລຸກ" ສ້າງສຽງປະກອບໄປພ້ອມ ເພື່ອໃຫ້ເດັກນ້ອຍເຂົ້າໃຈຄວາມໝາຍ.*

## ► ວິທີຮຽນຮູ້ວ່າສຽງມາຈາກທິດທາງໃດ

ໃນເບື້ອງຕົ້ນເດັກຮຽນຮູ້ ໃນການຊອກຫາທີ່ຕັ້ງຂອງສຽງທີ່ດັງຂຶ້ນ ຢູ່ໃກ້ໆຫູຂອງພວກເຂົາ ຈາກນັ້ນຈຶ່ງຮຽນຮູ້ ໃນການຊອກຫາແຫຼ່ງທີ່ມາຂອງສຽງທີ່ດັງຂຶ້ນຢູ່ລະດັບທີ່ສູງກວ່າຫູ ແລະ ຕ່ຳກວ່າຫູ. ຈາກນັ້ນຈຶ່ງຊອກຫາແຫຼ່ງທີ່ມາຂອງສຽງທີ່ຫ່າງອອກໄປ. ສຸດທ້າຍແມ່ນໃຫ້ເດັກຊອກຫາແຫຼ່ງທີ່ມາຂອງສຽງທີ່ດັງຂຶ້ນຢູ່ທາງຫຼັງພວກເຂົາ.



- ຖ້າລູກຂອງທ່ານຫາກສົນໃຈເຄື່ອງຫຼິ້ນທີ່ມີສຽງ ແລະ ທ່ານເອງກໍ່ໝັ້ນໃຈວ່າ ເຂົາໄດ້ຍິນສຽງຂອງມັນ, ຈຶ່ງພະຍາຍາມຍ້າຍເຄື່ອງຫຼິ້ນອັນນັ້ນ ອອກຈາກຂອບເຂດທີ່ເຂົາສາມາດແນມເຫັນ. ຈາກນັ້ນເຮັດໃຫ້ເຄື່ອງຫຼິ້ນນັ້ນ ດັງຢູ່ລະດັບທີ່ສູງກວ່າຫູຂອງເຂົາ ເພື່ອສັງເກດວ່າ ເດັກຈະຫັນໜ້າມາຊອກມັນບໍ່, ເມື່ອເດັກສາມາດຮູ້ໄດ້ແລ້ວ ຈຶ່ງເຮັດໃຫ້ເຄື່ອງຫຼິ້ນນັ້ນດັງ ຢູ່ໃນລະດັບທີ່ຕ່ຳກວ່າຫູ, ສຸດທ້າຍແມ່ນ ເຮັດໃຫ້ມັນດັງຢູ່ທາງຫຼັງຂອງເດັກ.



ຈົ່ງພະຍາຍາມມີຄວາມອົດທົນ ເພາະວ່າມັນອາດໃຊ້ເວລາເປັນເດືອນ ຈົນກວ່າເດັກຈະສາມາດ ຫັນໜ້າໄປຫາສຽງນັ້ນໄດ້, ເມື່ອເຂົາມີການຕອບສະໜອງຕໍ່ສຽງດັ່ງກ່າວໃນບາງເທື່ອ (ອາດຈະບໍ່ແມ່ນທຸກໆເທື່ອ) ໃຫ້ທ່ານສາມາດກ້າວໄປຫາຂັ້ນຕອນຕໍ່ໄປ.



- ປ່ຽນສີໜ້າຂອງທ່ານ ແລະ ໃຊ້ທ່າທາງເພື່ອດຶງດູດຄວາມສົນໃຈຂອງເດັກ ເຊັ່ນ: ການຊີ້ໄປທີ່ໃບຫູ ແລະ ຫຼັງຈາກນັ້ນ ແມ່ນຊີ້ໄປທີ່ມາຂອງສຽງນັ້ນ.




- ລອງເຊື່ອງເຄື່ອງຫຼິ້ນທີ່ມີສຽງດັງໃນຖົງເສື້ອ, ສັງເກດເບິ່ງວ່າ ເດັກສາມາດຊອກຫາມັນໄດ້ບໍ່ ໃນຂະນະທີ່ທ່ານເຮັດໃຫ້ມັນມີສຽງດັງ.

## ► ວິທີ ເພື່ອຊ່ວຍໃຫ້ລູກຂອງທ່ານສາມາດຈື່ຈຳສຽງ




- ສັງເກດບັນດາສຽງທົ່ວໄປ ທີ່ເຂົາສາມາດ ໄດ້ຍິນ ແລະ ຊ່ວຍເຂົາຕັ້ງຊື່ສຽງເຫຼົ່ານັ້ນ.




- ເມື່ອເດັກສະແດງຄວາມສົນໃຈຕໍ່ສຽງເຫຼົ່ານັ້ນ, ອະທິບາຍໃຫ້ເຂົາຮູ້ວ່າແມ່ນສຽງຫຍັງ.



- ພາເດັກນ້ອຍໄປຕາມສະຖານທີ່ຕ່າງໆ ເມື່ອທ່ານໄດ້ຍິນສຽງໃດໜຶ່ງ ຈົ່ງສະ ແດງໃຫ້ເຂົາຮູ້ວ່າ ສຽງມາຈາກໃສ?, ແມ່ນຫຍັງເຮັດໃຫ້ສຽງນັ້ນດັງ.




- ບອກວິທີໃຫ້ເດັກສ້າງສຽງຕ່າງໆທີ່ ແຕກຕ່າງກັນດ້ວຍຕົວຂອງເຂົາເອງ.

## ► ວິທີຊ່ວຍໃຫ້ລູກຂອງທ່ານສັງເກດ ເມື່ອມີສອງສຽງແຕກຕ່າງກັນ

- ຊອກຫາອຸປະກອນ ສອງຢ່າງທີ່ສາມາດກໍ່ໃຫ້ເກີດສຽງສອງສຽງ ທີ່ແຕກຕ່າງກັນ. ແຕ່ຈົ່ງຈື່ໄວ້ວ່າ ອຸປະກອນດັ່ງກ່າວຕ້ອງມີໂທນສຽງ ແລະ ຄວາມດັງທີ່ເໝາະສົມທີ່ເດັກສາມາດໄດ້ຍິນ. ວາງອຸປະກອນດັ່ງກ່າວໄວ້ຂ້າງໜ້າຂອງເດັກ. ທຳອິດສ້າງສຽງດັງທີ່ເກີດຈາກອຸປະກອນທັງສອງຢ່າງນັ້ນ. ຈາກນັ້ນໃຫ້ເຂົາຫຼັບຕາ ແລ້ວທ່ານກໍ່ເຄາະ ຫຼື ສຽງຈາກອຸປະກອນອັນໃດອັນໜຶ່ງ, ເມື່ອເຂົາມືນຕາຂຶ້ນຈົ່ງຖາມລາວວ່າ ແມ່ນສິ່ງໃດທີ່ເຮັດໃຫ້ເກີດສຽງດັງຫວ່າງກີ້ນີ້.



- ພ້ອມກັນນັ້ນ ໃຫ້ຄິດຫາການໃຊ້ທ່າທາງສຳລັບຈັງຫວະສຽງ 2 ຫຼື 3 ແບບທີ່ຄ້າຍຄືກັນ. ຈາກນັ້ນໃຫ້ເດັກສະແດງທ່າທາງດັ່ງກ່າວ ໃນຂະນະທີ່ທ່ານເຮັດສຽງດັ່ງກ່າວ. ເຊິ່ງນີ້ແມ່ນຕົວຢ່າງຂອງສຽງທີ່ເກີດຈາກຄຳເວົ້າ.







- ໃຫ້ລູກຂອງທ່ານ ຟັງສຽງຂອງສະມາຊິກໃນຄອບຄົວ ແລ້ວເດົາວ່າ ນັ້ນແມ່ນສຽງຂອງໃຜ. ເຊິ່ງວິທີນີ້ຈະຊ່ວຍເຮັດໃຫ້ເດັກສາມາດຈຳແນກວ່າ ແມ່ນສຽງຂອງຜູ້ຊາຍ ຫຼື ແມ່ຍິງ ທີ່ກຳລັງເວົ້າອີກດ້ວຍ.




### ລູກຂອງຂ້ອຍກຳລັງຮຽນຮູ້ການຟັງຢູ່ບໍ?

ທ່ານຕ້ອງໄດ້ເຮັດກິດຈະກຳທັງໝົດເຫຼົ່ານີ້ຫຼາຍໆຄັ້ງ, ຊ້ຳແລ້ວຊ້ຳອີກ. ຫຼັງຈາກນັ້ນ 6 ເດືອນ ຈົ່ງກວດເບິ່ງຄວາມສາມາດໃນການໄດ້ຍິນຂອງເດັກອີກເທື່ອໜຶ່ງ (ເບິ່ງບົດທີ 5). ທ່ານອາດຈະສັງເກດເຫັນວ່າ ລູກຂອງທ່ານສາມາດໄດ້ຍິນສຽງຕ່າງໆຫຼາຍຂຶ້ນ, ເຊິ່ງນີ້ກໍ່ບໍ່ໄດ້ໝາຍຄວາມວ່າ ຄວາມສາມາດໃນການໄດ້ຍິນຂອງເຂົາໄດ້ມີການປ່ຽນແປງ, ແຕ່ມັນໝາຍຄວາມວ່າເຂົາໄດ້ຮຽນຮູ້ການນຳໃຊ້ຄວາມສາມາດໃນການໄດ້ຍິນຂອງເຂົາໄດ້ດີຂຶ້ນ. ຈົ່ງຍ້ອງຍໍຊົມເຊີຍ ເມື່ອລູກຂອງທ່ານສາມາດສັງເກດສຽງ ແລະ ຄຳເວົ້າໄດ້.

ໄປພ້ອມໆກັບການຝຶກແອບຂ້າງເທິງນັ້ນ, ຈົ່ງພະຍາຍາມເສີມສ້າງສິ່ງທີ່ເດັກໄດ້ຮຽນໄປແລ້ວນັ້ນໂດຍໝູນໃຊ້ສຽງຕ່າງໆ ທີ່ເຂົາສາມາດໄດ້ຍິນ. ເມື່ອເດັກສາມາດຮຽນຮູ້ຄຳສັບ ແລະ ຄວາມໝາຍຂອງມັນໄດ້ດີຂຶ້ນເດັກຄົນນັ້ນກໍ່ຈະສາມາດສະແດງອອກເຖິງຄວາມຮູ້ສຶກຂອງເຂົາ ແລະ ສາມາດສື່ສານກັບບຸກຄົນອື່ນໄດ້ດີຂຶ້ນອີກດ້ວຍ.